ຄູ່ມືຊັບສົມທາງປັນຍາ ສະບັບ ທີ 1

ຄູ່ມືການຄຸ້ມຄອງ ເຄື່ອງໝາຍການຄ້າ & ການສ້າງຍີ່ຫໍ້ດີຈິຕອລໃນຂົງເຂດການຄ້າ ທາງເອເລັກໂຕຣນິກ ໃຫ້ເກີດຜົນປະໂຫຍດ ຕໍ່ຫ້ອໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ໃນ ສປປ ລາວ.



ເປົ້າໝາຍ

01

ສົ່ງເສີມຄວາມເຂົ້າໃຈ ໃຫ້ທຸລະກິດກ່ຽວກັບ ຄວາມສຳຄັນຂອງ ການຄຸ້ມຄອງເຄື່ອງໝ າຍການຄ້າ ແລະ ຂັ້ນ ຕອນການຈົດທະບຽນ

02

ແນະແນວທິດທາງໃນ ການສ້າງຍີ່ຫໍ້ໃນ ຂົງເຂດດິຈິຕອນ ແລະ ເພີ່ມມູນຄ່າຂອງຍີ່ຫໍ້ ໃຫ້ແກ່ທຸລະກິດ

03

ແບ່ງປັນປະສົບການໃນ ການປົກປ້ອງ ແລະ ການ ບັງຄັບໃຊ້ກົດໝາຍ ໃນ ເຄື່ອງໝາຍການຄ້າ ຕາມກົດໝາຍ ແຫ່ງ ສປປ ລາວ

ສາລະບານ

1	ເຄື່ອງໝາຍການຄ້າ ແລະ ແນວທາງການພັດທະນາແບຣນ(ຍີ່ຫໍ້)
2	ການຈົດທະບຽນເຄື່ອງໝາຍການຄ້າ
3	ການສ້າງອັດຕະລັກຂອງແບຣນ(ຍີ່ຫໍ້)
4	ການເຮັດໃຫ້ແບຣນ (ຍີ່ຫໍ້) ເກີດລາຍໄດ້
5	ການປົກປ້ອງ ແລະ ການບັງຄັບໃຊ້ສິດໃນເຄື່ອງໝາຍການຄ້າຂອງທ່ານພາຍໃຕ້ກົດໝາຍ



1. ເຄື່ອງໝາຍການຄ້າ ແລະ ແນວທາງການພັດທະນາ ແບຣນ(ຍີ່ຫໍ້)

ເຄື່ອງໝາຍການຄ້າ ແມ່ນຫຍັງ?

ເຄື່ອງໝາຍການຄ້າ ແມ່ນ ຊື່, ໂລໂກ້ ຫຼື ສັນຍາລັກ ໃດໜຶ່ງ ທີ່ໃຊ້ລະບຸ ຫຼື ຈຳແນກ ສິນຄ້າ ຫຼື ການບໍລິການ ຂອງທ່ານອອກຈາກຄົນອື່ນ.
ເຊິ່ງສັນຍາລັກ ຫຼື ເຄື່ອງໝາຍໃດໜຶ່ງ ຫາກກໍ່ໃຫ້ເກີດຄວາມສັບສົນເຂົ້າໃຈຜິດ ຫຼື ຂາດຄວາມໂດດເດັ່ນຊັດເຈນຈະບໍ່ໄດ້ຮັບສິດໃນການປົກປ້ອງພາຍໃຕ້ກົດໝາຍ.




ອົງປະກອບຫຼັກ

- ເຄື່ອງໝາຍຄຳ/ຊື່ (ຕົວຢ່າງ: Nike)
- ໂລໂກ້
- ຄຳຂວັນ (ຕົວຢ່າງ: “Just Do It”)
- ຊື່ບໍລິການ (ຕົວຢ່າງ: Grab)
- ຮູບຮ່າງ ຫຼື ເຄື່ອງໝາຍ 3 ມິຕິ



ເຄື່ອງໝາຍສີ(Color Mark): ຄືການນຳໃຊ້ສີ ເປັນເຄື່ອງໝາຍ ຫຼື ໂດຍການນຳໃຊ້ລະຫັດສີທີ່ຊັດເຈນ.
(ເຄື່ອງໝາຍສີທີ່ບໍ່ມີການກຳນົດຊັດເຈນ ຈະບໍ່ເຂົ້າເງື່ອນໄຂຮັບການປົກປ້ອງ)



ວັດຖຸປະສົງ

- ✓ ເຄື່ອງໝາຍການຄ້າຊ່ວຍ**ບອກແຫຼ່ງກຳເນີດ ແລະ ສ້າງຄວາມເຊື່ອໝັ້ນ.**
- ✓ ເຮັດໃຫ້ລູກຄ້າໝັ້ນໃຈວ່າ ສິນຄ້າ/ບໍລິການນີ້ເປັນຂອງແທ້ ບໍ່ແມ່ນຂອງປອມ.
- ✓ ສາມາດ**ນຳໃຊ້ທາງກົດໝາຍ**ເພື່ອດຳເນີນຄະດີ ຫຼື ປົກປ້ອງສິດ.
- ✓ ຊ່ວຍ**ສ້າງຊື່ສຽງ** ແລະ ຄວາມນ່າເຊື່ອຖືໃນລະຍະຍາວ.

ສິ່ງທີ່ບໍ່ສາມາດເປັນເຄື່ອງໝາຍການຄ້າ ❌

- ການຈົດທະບຽນທຸລະກິດ
- ຊື່ໂດເມນ (ນອກເສຍຈາກວ່າໄດ້ຈົດທະບຽນເປັນເຄື່ອງໝາຍການຄ້າ)
- ໄດ້ຮັບການປົກປ້ອງໂດຍອັດຕະໂນມັດ ພຽງເພາະທ່ານໃຊ້ທາງອິນເຕີເນັດ

ເຄື່ອງໝາຍສຽງ/ກິ່ນ/ລົດຊາດ: ບໍ່ເຂົ້າເງື່ອນໄຂຮັບການປົກປ້ອງເຄື່ອງໝາຍການຄ້າ ນອກເສຍຈາກວ່າຈະຖືກສະແດງເປັນ ສັນຍາລັກທີ່ເບິ່ງເຫັນໄດ້.

ຄວາມກ່ຽວພັນໃນທາງເອເລັກໂທນິກ*(ສຳລັບ SMEs ທີ່ຂາຍອອນໄລນ໌)*

- **ຊື່ຮ້ານໃນເວັບໄຊທ໌ຂອງຕົນເອງ** - ສາມາດຮັບການປົກປ້ອງເປັນເຄື່ອງໝາຍການຄ້າໄດ້ ຖ້າມີຄວາມໂດດເດ່ນ/ແຕກຕ່າງຊັດເຈນ.
- **ຊື່ ບັນຊີ ຜູ້ໃຊ້ສື່ອອນລາຍ (Instagram, Facebook ແລະອື່ນໆ)** - ການໃຊ້ຊື່ແບລນ(ຍີ່ຫໍ້)ໃຫ້ສອດຄ່ອງຄືກັນທຸກແພລດຟອມຊ່ວຍສ້າງການຮັບຮູ້ຈື່ຈຳຍີ່ຫໍ້ຂອງທ່ານໄດ້ງ່າຍ.
- **ໂລໂກ້ສິນຄ້າ, ແຮັດແທັກ, ແລະ ການອອກແບບບັນຈຸພັນ** - ເປັນສ່ວນປະກອບລັກສະນະດ້ານການເບິ່ງເຫັນຂອງຮ້ານອອນໄລນ໌ ແລະອາດຖືກຄັດລອກໄດ້ຖ້າບໍ່ມີການຄຸ້ມຄອງ.

***ແບຣນທີ່ບໍ່ໄດ້ຈົດທະບຽນ** ເຮັດໃຫ້ຜູ້ລອກແບບນຳຊື່/ໂລໂກ້ໄປໃຊ້ໄດ້- ສົ່ງຜົນໃຫ້SME ເສຍລູກຄ້າ , ໂດຍສະເພາະໃນຕະຫຼາດແພລດຟອມອອນໄລນ໌*

ຂໍ້ສະຫຼຸບ

- ເຄື່ອງໝາຍການຄ້າອາດເປັນ **ຕົວອັກສອນ, ສັນຍາລັກ, ຮູບແບບອອກແບບ ຫຼື ການປະສົມປະສານ**.
- ຈະບໍ່ເກີດຂຶ້ນອັດຕະໂນມັດ - ຈຳເປັນຕ້ອງ **ຍື່ນຈົດທະບຽນ** ເພື່ອໄດ້ຮັບການປົກປ້ອງ ແລະ **ນຳໃຊ້ຢ່າງຕໍ່ເນື່ອງ** ເພື່ອຮັກສາການປົກປ້ອງພາຍໃຕ້ກົດໝາຍ.
- ຊ່ວຍປົກປ້ອງແບຣນຂອງທ່ານ **ທັ້ງອອຟລາຍ ແລະ ອອນໄລນ໌**.
- ເຄື່ອງໝາຍການຄ້າທີ່ຈົດທະບຽນແລ້ວ ຈະເປັນ **ເຄື່ອງມືທາງກົດໝາຍ** ໃຫ້ທ່ານໃນການດຳເນີນການຕໍ່ຕ້ານການລະເມີດ ຫຼື ການປອມແປງ.

ບົດບາດສຳຄັນຂອງເຄື່ອງໝາຍການຄ້າໃນການສ້າງແບຣນດິຈິຕອນ

ການປົກປ້ອງແບຣນ & ການສ້າງຊື່ສຽງ

ກົດໝາຍຊ່ວຍປົກປ້ອງແບຣນຈາກການລະເມີດສິດ, ການລອກແບບ ແລະ ຊ່ວຍຮັກສາຊື່ສຽງຂອງແບຣນ.

ການສ້າງຕົວຕົນຂອງແບຣນ & ການຮັບຮູ້

ເຄື່ອງໝາຍການຄ້າຊ່ວຍໃຫ້ຜູ້ບໍລິໂພກຈື່ຈຳ ແລະ ລະບຸສິນຄ້າ/ບໍລິການກັບບໍລິສັດ ຫຼື ແຫຼ່ງກຳເນີດທີ່ແນ່ນອນ.

ສິ່ງເສີມການຄົ້ນຫາທາງດິຈິຕອນ

ໃຊ້ເຄື່ອງໝາຍການຄ້າເປັນຄຳຄົ້ນຫາທີ່ສຳຄັນ ເພື່ອໃຫ້ລູກຄ້າຫາແບຣນຂອງທ່ານໄດ້ງ່າຍໃນ Google ແລະ ສື່ອອນໄລນ໌ (ເຊັ່ນ: Colgate).

ສ້າງຄວາມໄວ້ວາງໃຈ & ຄວາມນ່າເຊື່ອຖື

ເຄື່ອງໝາຍທີ່ຄຸ້ນເຄີຍສື່ເຖິງຄຸນນະພາບທີ່ສະໝ່ຳສະເໝີ ແລະ ຄວາມໜ້າເຊື່ອຖື, ສ້າງຄວາມເຜິ່ງພໍໃຈໃຫ້ກັບລູກຄ້າ.

ການຕະຫຼາດ ແລະ ການສ້າງແບຣນ

ເຄື່ອງໝາຍການຄ້າແມ່ນເຄື່ອງມືການຕະຫຼາດທີ່ມີປະສິດທິພາບ - ເຮັດໃຫ້ຍີ່ຫໍ້ຂອງທ່ານເປັນທີ່ຈົດຈຳໄດ້ງ່າຍ ແລະ ຊ່ວຍໃຫ້ທ່ານແຕກຕ່າງໂດດເດັ່ນເໜືອຄູ່ແຂ່ງ

ເປີດທາງການສ້າງລາຍຮັບຜ່ານຊ່ອງທາງດິຈິຕອນ

ເຄື່ອງໝາຍທາງການຄ້າມີມູນຄ່າທາງການເງິນ: ສາມາດຊື້, ຂາຍ, ອະນຸຍາດ ຫຼື ໃຊ້ເປັນຫຼັກຊັບໃນການກູ້ຢືມເງິນໄດ້.

ການຕິບໂຕທາງທຸລະກິດ

ຂໍ້ຄວນຈຳ

- ຮັບປະກັນ**ສິດທາງກົດໝາຍ** - ປ້ອງກັນການນຳໃຊ້ໂດຍບໍ່ໄດ້ຮັບອະນຸຍາດ/ສິນຄ້າລອກຮຽນແບບ (ສຳຄັນຫຼາຍເມື່ອຊື່ ຫຼື ເນື້ອຫາຂອງທ່ານ ເປັນ“ໄວຣັລ”).
- ສ້າງເອກກະລັກຜ່ານຊ່ອງທາງສັນຍາລັກ, ໂລໂກ້, ຄຳ, ທີ່ໂດດເດ່ນ - ໃຫ້ການຈຳແນກໄດ້ທັນທີ.
- ໃຊ້ເຄື່ອງໝາຍເປັນ**ຄຳສັບສຳຄັນ** - ເພີ່ມການຄົ້ນພົບໃນ Google, ຕະຫຼາດອອນໄລນ໌ ແລະ ສື່ອອນໄລນ໌.
- **ສະແດງຄວາມຖືກຕ້ອງທາງກົດໝາຍ** ແລະ ການປົກປ້ອງ, ຈະເພີ່ມຄວາມໝັ້ນໃຈໃຫ້ແກ່ລູກຄ້າ ໂດຍສະເພາະຊ່ອງທາງອອນໄລນ໌.
- ໂດດເດ່ນໃນຕະຫຼາດອອນໄລນ໌ທີ່ໜາແໜ້ນຊ່ວຍໃຫ້ແບຣນຂອງທ່ານແຕກຕ່າງຢ່າງຊັດເຈນ.
- ເປີດໂອກາດທາງທຸລະກິດໃໝ່ ການໃຫ້ສິດ (licensing), ຂາຍສິນຄ້າແບຣນ (merchandising) ແລະ ຮ່ວມມືກັບ influencer, ປ່ຽນແບຣນໃຫ້ກາຍເປັນລາຍຮັບ.

ຊັບສິນແບຣນ

ແບຣນຂອງທ່ານທີ່ຢູ່ໃນແພລດຟອມອອນໄລນ໌-ແລະທຸກອົງປະກອບຈຳເປັນຕ້ອງຖືກກຳນົດໃຫ້ຊັດເຈນ ແລະ ໄດ້ຮັບການປົກປ້ອງ

ໂລໂກ້ & ໄອຄອນ(ສັນຍາລັກ)

*ໂລໂກ້ແມ່ນ **ໃບໜ້າຂອງແບຣນຂອງທ່ານ.***

ຈຳເປັນຕ້ອງມີຄວາມໂດດເດ່ນ, ສະໝ່ຳສະເໝີຂ້າມແພລດຟອມ, ແລະຈົດທະບຽນເປັນ ເຄື່ອງໝາຍການຄ້າ ເພື່ອປ້ອງກັນການ ຮຽນແບບ.

🔧 *ຄິດເສີຍວ່າມັນເປັນ "ລາຍນິ້ວມື" ຂອງແບຣນ.*

ຊື່ສິນຄ້າ/ບໍລິການ

*ເປັນຕົວ**ລະບຸທີ່ມີຄຸນຄ່າ..***

ການບັນທຶກແລະຈົດທະບຽນເປັນເຄື່ອງໝາຍການຄ້າໃຫ້ກັບຊື່ທີ່ ເປັນເອກະລັກ (ເຊັ່ນ "Coffee Cube", "Pizza Lab") - ພວກມັນ ສາມາດເຕີບໂຕເປັນແບຣນອົດສະຫຼະໄດ້.

📌 *ຢ່າໃຫ້ຄົນອື່ນອາໄສໃຊ້ຊື່ຂອງທ່ານ.*

ແຮັດແທັກ & ແທັກແຄມເປນ

*ແຮັດໜ້າທີ່**ເປັນເຄື່ອງມື "ປາກຕໍ່ປາກ" ດິຈິຕອນ.***

ລາຍຊື່ແຮັດແທັກທາງການທັ້ງໝົດ ແລະ ຕິດຕາມການນຳໃຊ້ ເພື່ອປົກປ້ອງຊື່ສຽງແບຣນ.

📢 *ແຮັດແທັກສ້າງຊຸມຊົນ - ແຕ່ກ່ອາດຖືກ "ນຳໄປໃຊ້ໂດຍບໍ່ໄດ້ ຮັບອະນຸຍາດ" ໄດ້.*

ຊື່ຮ້ານອອນໄລນ໌ & ຊື່ໂດເມນ

ເວັບໄຊ, ຊື່ຜູ້ໃຊ້ໃຊ້ງ່ອມີເດຍ, ແລະ ຊື່ຮ້ານ e-commerce (ເຊັ່ນ bacancafe.com, @ockpoptok) ລ້ວນເປັນ "ປະຕູໜ້າດິຈິ ຕອນ".

ຄວາມສະໝ່ຳສະເໝີ = ຄວາມເຊື່ອໃຈໃນແບຣນ.

🔒 *ຈອງ/ປ້ອງກັນຊື່ ໃຫ້ແນ່ນອນກ່ອນທີ່ຄົນອື່ນຈະຈັບຈອງ.*



2. ການຈົດທະບຽນເຄື່ອງໝາຍການຄ້າ

ລະສາມາດຈົດທະບຽນເຄື່ອງໝາຍການຄ້າໄດ້ຢູ່ໃສ

ສາມາດປົກປ້ອງແບຣນຂອງທ່ານທັ້ງໃນປະເທດ ແລະ ສາກົນ ໄດ້

ການຈົດທະບຽນໃນປະເທດ(ສປປ ລາວ)

ຈົດທະບຽນໂດຍກົງຜ່ານທາງ ກົມຊັບສິນທາງປັນຍາ ຂອງປະເທດທີ່ທ່ານຕ້ອງການການປົກປ້ອງເຄື່ອງໝາຍຂອງທ່ານ

ໃນ ສປປ ລາວ - ກົມຊັບສິນທາງປັນຍາ (DIP)ກະຊວງອຸດສາຫະກຳ ແລະ ການຄ້າ.

💡 **ເໝາະສົມທີ່ສຸດ** ເມື່ອຕ້ອງການປົກປ້ອງຄຸ້ມຄອງ ໃນ ສປປ ລາວ.

ການຈົດທະບຽນສາກົນ - ຜ່ານລະບົບ Madrid ຂອງ WIPO

ໃບຄຳຮ້ອງຄັ້ງດຽວ. ຄ່າທຳນຽມຄັ້ງດຽວ. ຫຼາຍ ປະເທດ.

ລະບົບ Madrid ໃຫ້ທ່ານຈົດທະບຽນເຄື່ອງໝາຍໄດ້ ໃນ ຫຼາຍກ່ວາ **130 ປະເທດ** ຜ່ານການຍື່ນຄຳຮ້ອງ **ຄັ້ງດຽວ** ກັບ WIPO **ໂດຍ ອ້າງອີງຈາກການຈົດ ທະບຽນໃນປະເທດຕົ້ນທາງ** ຂອງທ່ານ.

✅ ເໝາະສົມ ສຳລັບການ **ຂະຫຍາຍທຸລະກິດ ໃນພາກພື້ນ ຫຼື ທົ່ວໂລກ.**

🔒 **ການປົກປ້ອງຕາມກົດໝາຍ**
- ✓ ມີຫຼັກຖານວ່າທ່ານເປັນເຈົ້າຂອງ
- ✓ ສາມາດຟ້ອງຮ້ອງເມື່ອຖືກລະເມີດ

⚡ **ມີຜົນບັງຄັບໃຊ້**
- ✓ ຈັດການກໍລະນີປອມແປງ ແລະ domain ໄດ້ງ່າຍ
- ✓ ໃຊ້ເປັນຫຼັກຖານໃນການຮ້ອງຂໍລົບລ້າງ ຫຼື ຢຸດການລະເມີດ

🌐 **ການປົກປ້ອງທົ່ວປະເທດ (ລະຫວ່າງປະເທດ)**
- ✓ ຍື່ນຈົດທະບຽນເທື່ອດຽວ
- ✓ ນຳໄປຂະຫຍາຍຈົດທະບຽນຢູ່ຕ່າງປະເທດໄດ້

💼 **ເພີ່ມມູນຄ່າຂອງແບລນ(ຍີ່ຫໍ້)**
- ✓ ເປັນຊັບສິນຂອງທຸລະກິດ
- ✓ ເພື່ອນຳໃຊ້ ການອະນຸຍາດ, ການຂະຫຍາຍຕົວແທນ franchise,ການລົງທຶນ ແລະ ການຂະຫຍາຍສາຂາ

ການຈົດທະບຽນເຄື່ອງໝາຍການຄ້າໃນລາວ (ກົມຊັບສິນທາງປັນຍາ DIP)

ໄລຍະເວລາການຈົດທະບຽນ: ໃນທາງປະຕິບັດ ປົກກະຕິ 10-12 ເດືອນນັບຈາກວັນຍື່ນຄຳຮ້ອງ (ໃນກໍລະນີຂັ້ນຕອນຕ່າງໆເປັນໄປຕາມທີ່ກຳນົດ).

1. ຍື່ນຄຳຮ້ອງ ແລະ ຮັບເອກະສານຢືນຢັນການຍື່ນຄຳຮ້ອງ

- **ຜູ້ທີ່ຍື່ນໄດ້:** ພົນລະເມືອງລາວ ຫຼື ຕ່າງຊາດ ສາມາດຍື່ນໄດ້. ຜູ້ສະໝັກຕ່າງຊາດທີ່ບໍ່ມີຖານະຢູ່ໃນລາວ ຈຳເປັນຕ້ອງແຕ່ງຕັ້ງຕົວແທນທ້ອງຖິ່ນ.
- **ເອກະສານ:**
  - ຖ້າມີຕາປະທັບບໍລິສັດ ບໍ່ຈຳເປັນຮັບຮອງເອກະສານ ຫຼື ຮັບຮອງທາງກົດໝາຍ.
  - ຍື່ນສຳເນົາເທົ່ານັ້ນ; ຕົວແທນເປັນຜູ້ຮັບຜິດຊອບຕໍ່ຄວາມແທ້ຈິງຂອງເອກະສານ.
  - ອາດຈະຕ້ອງສະແດງເອກະສານຕົ້ນສະບັບເພື່ອໃຫ້ ກົມຊັບສິນທາງປັນຍາDIP ກວດຢືນຢັນ.

2. ການກວດກາເບື້ອງຕົ້ນ
(ດຳເນີນໃຫ້ສຳເລັດພາຍໃນ ອັນທີ່ຫຼັງຈາກຮັບຄຳຮ້ອງຂໍທີ່ຄົບຖ້ວນ)

ຈະແຈ້ງໃຫ້ຜູ້ຍື່ນຄຳຮ້ອງຊາບ ຖ້າຈຳເປັນຕ້ອງດຳເນີນການເພີ່ມເຕີມ

3. ເຜີຍແຜ່ຄຳຮ້ອງໃນຈົດໝາຍເຫດທາງລັດຖະການຂອງກົມຊັບສິນທາງປັນຍາ (“ການເຜີຍແຜ່”)
(ພາຍໃນ 60 ວັນ ນັບແຕ່ວັນກວດກາເບື້ອງຕົ້ນສຳເລັດ)

4. ຄຳຮ້ອງຂໍຄັດຄ້ານ
(ຖ້າມີ ຕ້ອງຍື່ນພາຍໃນ 60 ວັນ ນັບແຕ່ວັນເຜີຍແຜ່)


5. ການກວດສອບເນື້ອໃນ
(ນັບແຕ່ວັນເຜີຍແຜ່ ຖ້າບໍ່ມີການຍື່ນຄຳຮ້ອງຂໍຄັດຄ້ານ)

6. ຈົດທະບຽນເຄື່ອງໝາຍການຄ້າ

7. ອອກໃບຢັ້ງຢືນການຈົດທະບຽນໃຫ້ແກ່ຜູ້ຍື່ນຄຳຮ້ອງ

ການຈົດທະບຽນ ສາກົນ ຜ່ານ

(ລະບົບ Madrid ຂອງ WIPO)





3. ການສ້າງອັດຕະລັກຂອງ ແບຣນ(ຍີ່ຫໍ້)

ຄວາມຜິດພາດກ່ຽວກັບເຄື່ອງໝາຍການຄ້າທີ່ພົບເຫັນເລື້ອຍໃນວິສາຫະກິດນ້ອຍ (SMEs)

ທຸລະກິດSMEsຫຼາຍໆແຫ່ງ ມັກເຮັດໃຫ້ແບຣນຂອງຕົນຕົກຢູ່ໃນຄວາມສ່ຽງໂດຍບໍ່ຕັ້ງໃຈ. ດັ່ງນີ້:

❌ ບໍ່ຈົດທະບຽນເຄື່ອງໝາຍການຄ້າ

"ຂ້ອຍມີໂລໂກ້ແລ້ວ ກໍປອດໄພ."

ບໍ່ແມ່ນແບບນັ້ນ!

- ບໍ່ສາມາດຟ້ອງຮ້ອງຄະດີລະເມີດເຄື່ອງໝາຍໄດ້ຖ້າບໍ່ຈົດທະບຽນຢ່າງເປັນທາງການ.
- ການປອມແປງການລອກຮຽນແບບເຮັດໃຫ້ຜູ້ບໍລິໂພກເຂົ້າໃຈຜິດ, ເຮັດໃຫ້ຜົນສຶດຍາກ-ໂດຍສະເພາະທາງອອນໄລນ໌ ແລະໃຊ້ເວລາດົນ ມີຄ່າໃຊ້ຈ່າຍສູງ.

➡️ ການບັງຄັບໃຊ້ສິດຂອງທ່ານ**ຈະມີຄ່າໃຊ້ຈ່າຍຫຼາຍຂຶ້ນ, ເຮັດໃຫ້ເສຍເວລາ ແລະ ຜົນບໍ່ແນ່ນອນ**.

⚠️ ການລອກຮຽນແບບ ຫຼື ຊື່ຄ້າຍຄືກັບແບຣນທີ່ມີຢູ່

"ຊື່ນີ້ຟັງຄ້າຍດີ - ໃຊ້ເລີຍ! "

SMEs ຫຼາຍໆບ່ອນ ເລືອກຊື່ທີ່ຄ້າຍຄືກັບແບຣນໃຫຍ່-ຈະຮູ້ຕົວ ຫຼື ບໍ່ກໍຕາມ

ຕົວຢ່າງ: I-AppleFix ສຳລັບຮ້ານສ້ອມໂທລະສັບ.

➡️ ນຳໄປສູ່ບັນຫາກົດໝາຍ, ຄ່າໃຊ້ຈ່າຍການປ່ຽນແບຣນແລະກະທົບຕໍ່ຊື່ສຽງ.

🔁 ການຈັດການແບຣນບໍ່ສອດຄ່ອງຂ້າມແພລດຟອມ

“ຊື່ບ່ອນນີ້ ໂລໂກ້ອີກແບບບ່ອນນັ້ນ-ກໍຄືກັນຫມົດ!”

ການໃຊ້ຊື່ແບຣນ, ໂລໂກ້ ຫຼື ສໄຕລ໌ທີ່ແຕກຕ່າງກັນໃນເວັບໄຊ (ທ໌), Facebook, Instagram ເຮັດໃຫ້ລູກຄ້າສັບສົນ ແລະທຳໃຫ້ການຈື່ຈຳແບຣນອ່ອນລົງ.

➡️ ເຮັດໃຫ້ການປົກປ້ອງ ແລະ ການພິສູດການນຳໃຊ້ເຄື່ອງໝາຍການຄ້າ ຊັບຊ້ອນຍາກຂຶ້ນ.

🌐 ການຂະຫຍາຍຊ່ອງທາງອອນລາຍໂດຍບໍ່ມີການຄຸ້ມຄອງຈາກເຄື່ອງໝາຍການຄ້າ

“ກຳລັງໄປສູ່ລະດັບສາກົນ... ແຕ່ລືມປົກປ້ອງຊື່ຂອງຕົນໃນຕ່າງປະເທດ.”

ເຄື່ອງໝາຍການຄ້າເປັນສິດທິຕາມດິນແດນ -

ຈົດທະບຽນກ່ອນເຂົ້າຕະຫຼາດ/ປະເທດໃໝ່; ຜູ້ອື່ນ (ເຊັ່ນ ໃນ marketplace ຫຼື ໂຊຊຽວມີເດຍ) ອາດຈະຊິງຈົດທະບຽນກ່ອນ.

ໃນປະເທດກົດໝາຍແພ່ງ (ເຊັ່ນ ຈີນ, ໄທ, ລາວ) ສິດທິເກີດຈາກຫຼັກການ “ຜູ້ຍື່ນກ່ອນໄດ້ສິດກ່ອນ” (first-to-file) ບໍ່ແມ່ນ “ໃຊ້ກ່ອນໄດ້ກ່ອນ” - ການຈົດທະບຽນແມ່ນຈຳເປັນຢ່າງຍິ່ງ.

➡️ ສາມາດນຳໄປສູ່ການສູນເສຍສິດໃນຕະຫຼາດເປົ້າໝາຍ, ຖືກບັງຄັບໃຫ້ rebrand, ການຂາຍຖືກຂັດຂວາງ, ແລະຄ່າໃຊ້ຈ່າຍກົດໝາຍເພີ່ມຂຶ້ນເພື່ອກູ້ຄືນຊື່ແບຣນ.

🗂️ ການບັນທຶກ/ຈັດເກັບຊັບສິນແບຣນບໍ່ດີ

“ຂ້ອຍຮູ້ວ່າໂລໂກ້ທ້າຫມົດຢູ່ທີ່ໃດ-ບໍ່ຈຳເປັນບັນທຶກ/ຕິດຕາມ.”

ບໍ່ມີບັນຊີລາຍການທີ່ແນ່ຊັດວ່າມີອົງປະກອບແບຣນໃດແນ່, ຖືກສ້າງເມື່ອໃດ, ຫຼືໃຜເປັນເຈົ້າຂອງ.

➡️ ນຳໄປສູ່ຄວາມສັບສົນເມື່ອບັງຄັບໃຊ້ສິດ, ຍື່ນຂໍຈົດທະບຽນ ຫຼື ເຈລະຈາທຸລະກຳທາງທຸລະກິດ.

ປົກປ້ອງ “ຮ່ອງຮອຍເວັກໂຕນິກ” ຂອງເຄື່ອງໝາຍການຄ້າ ຂອງທ່ານ

🌎 ຈອງຊື່ໂດເມນຂອງທ່ານ ລ່ວງໜ້າ

ເຊັ່ນ: www.brandname.la

✅ ຊື້ຊື່ໂດເມນຂອງແບຣນ ກ່ອນຄົນອື່ນ ແມ້ວ່າເວັບຂອງ ທ່ານຍັງບໍ່ພ້ອມ.

✅ ພິຈາລະນາສະກຸນຫຼາຍໆ ເຊັ່ນ .com, .la, .net, .store.

🔒 **ລ໊ອກຊື່ບັນຊີ ໂຊຊຽວມີເດຍ**

ເຊັ່ນ: @brandname ໃນ Instagram, TikTok, Facebook, X.

✅ ຊື່ທີ່ສອດຄ່ອງຄືກັນ ເຮັດໃຫ້ລູກຄ້າຄົ້ນຫາ ທ່ານງ່າຍ.

✅ ປ້ອງກັນຜູ້ອື່ນປອມ ແປງຊື່ແບຣນຂອງທ່ານ

✅ ຈອງຊື່ໄວ້ກ່ອນ ແມ້ ວ່າຈະຍັງບໍ່ໃຊ້ງານ

🎯 **ໃຫ້ຊື່ແບຣນ ສອດຄ່ອງທົ່ວທຸກ ແພລດຟອມ**

✅ ຮັກສາຊື່, ໂລໂກ້ ແລະ ຄຳຂວັນ ໃຫ້ສອດຄ່ອງກັນ ໃນເວັບໄຊ(ທ໌), ໂຊຊຽວມີ ເດຍ ແລະ marketplace (Buylao, Wowbuy, ແລະ ອື່ນໆ).

✅ ສ້າງການຮັບຮູ້ແບຣນ ແລະ goodwill ເພື່ອເສີມ ກຳລັງການຄຸ້ມຄອງເຄື່ອງ ໝາຍການຄ້າ.

👀 **ເຝົ້າລະວັງການ ປອມແປງ ຫຼື ການນຳ ໃຊ້ທີ່ບໍ່ໄດ້ຮັບອະນຸຍາດ ຈາກທ່ານ**

⚠ ເຊັ່ນ: ເວັບໄຊປອມ, ບັນຊີ ສຳຮອງ, ພິມ URL ຜິດ (brandnme.com) - ອາດທຳລາຍຄວາມໄວ້ ວາງໃຈ ແລະ ຫຼອກລວງ ລູກຄ້າ.

✅ ແຈ້ງລາຍງານ ແລະ ດຳເນີນການໃຫ້ໄວ - ຈະ ງ່າຍກວ່າເມື່ອຊື່ຂອງທ່ານ ຈົດທະບຽນແລ້ວ.

🗂️ **ເຊື່ອມກັບ “ຍຸດທະ ສາດເຄື່ອງໝາຍການ ຄ້າ” ຂອງທ່ານ**

ຮູ້ບໍ??

ໂດເມນເວັບໄຊ ແລະ ບັນຊີ ໂຊຊຽວມີເດຍ ໃຊ້ເປັນຫຼັກຖານວ່າທ່ານໃຊ້ ເຄື່ອງໝາຍຢູ່ຈິງ

💼 ແນະນຳ: ເກັບພາບຖ່າຍໜ້າຈໍ screenshot ຂອງເວັບ ໄຊ ແລະ ໂປຣໄຟລ໌ສື່ ອອນໄລນ໌ທີ່ມີ URL ແລະ ວັນເວລາ - ເພື່ອໃຊ້ເປັນ ຫຼັກຖານປົກປ້ອງແບຣນ ໃນອານາຄົດ

ຈຸດ ສຳຄັນ

ສ້າງ “ID ດິຈິຕອນ” ທີ່ແຂງແຮງ + ເກັບ ຫຼັກຖານການນຳໃຊ້ - ເປັນຮາກຖານຂອງການນຳໃຊ້ສິດເຄື່ອງໝາຍການຄ້າທັງໝົດ.

ROUSE

ສ້າງ ແລະ ເກັບຮັກສາ ຊັບສິນ ເອເລັກໂທນິກຂອງແບລນ(ຍີ່ຫໍ້) ຂອງທ່ານ

ລອງຄິດເບິ່ງວ່າແບລນຂອງທ່ານແມ່ນ " ນະໂຍບາຍ ປະກັນໄພ" - ການບັນທຶກຂໍ້ມູນສາມາດຊ່ວຍທ່ານໃນການບໍລິຫານ, ການສ້າງເກດການ, ແລະ ການປ້ອງກັນ ການມີຢູ່ຂອງທ່ານໃນຊ່ອງທາງ ເອເລັກໂທນິກ.

ສິ່ງທີ່ຄວນລວບລວມໃນບັນທຶກຊັບສິນແບຣນ

ປະເພດຊັບສິນ : ລາຍລະອຽດທີ່ຕ້ອງບັນທຶກ

ໂລໂກ້: ເວີຊັນໄຟລ໌, ຮູບແບບ, ສິດການໃຊ້, ວັນຢັບເດດລ່າສຸດ

ໂດເມນເນມ: ຂໍ້ມູນການຈົດທະບຽນ, ວັນໝົດອາຍຸ, ການເຂົ້າເຖິງບັນຊີຜູ້ຈົດທະບຽນ.

ຂໍ້ມູນສື່ອອນໄລນ໌: ຊື່ຜູ້ໃຊ້, ເພລດຟອມ, ວັນສ້າງ, ຂໍ້ມູນການເຂົ້າລະບົບ.

ໜ້າຮ້ານອອນໄລນ໌: URL ຂອງ Buylao, Wowbuy, ຜູ້ຕິດຕໍ່ຜ່າຍບໍລິຫານ.

Hashtags: ແຄມເປນ, ວັນເລີ່ມໃຊ້, ຈຸດປະສົງ

ຕິດຕາມວັນໝົດອາຍຸ & ການຕໍ່ອາຍຸ

ເຄື່ອງໝາຍການຄ້າທີ່ຈົດທະບຽນທຸກອັນມີໄລຍະອາຍຸ (ຕົວຢ່າງ: 10 ປີ ໃນ ສປປ ລາວ).

➡️ ການບໍ່ຕໍ່ອາຍຸອາດໝາຍເຖິງການສູນເສຍສິດຈົດທະບຽນ.

✅ ເກັບກຳຂໍ້ມູນຕາມປະຕິທິນ:

- ເລກຄຳຮ້ອງຈົດທະບຽນ & ເລກທີຈົດທະບຽນ
- ວັນທີຍື່ນຄຳຮ້ອງ, ວັນທີຈົດທະບຽນ, ວັນໝົດອາຍຸ
- ຜູ້ຮັບຜິດຊອບການຕໍ່ອາຍຸ
- ຂອບເຂດອຳນາດກົດໝາຍ (ປະເທດ/ພື້ນທີ)

ຕິດຕາມໃບອະນຸຍາດ & ເງື່ອນໄຂການນຳໃຊ້

- ຜູ້ໄດ້ຮັບອະນຸຍາດ/ຜູ້ອະນຸຍາດຊື່ແລະການຕິດຕໍ່ຂອງ.
- ໄລຍະເວລາຂອງໃບອະນຸຍາດ
- ຂອບເຂດພົ້ນທີ່ ແລະ ຂອບເຂດສິດ
- ກຳນົດອັນ ທົບທວນ/ຕໍ່ອາຍຸ
- ວັນເລີ່ມ ແລະ ວັນສິ້ນສຸດຂອງສັນຍາ

➡️ **ຫຼັກໜ່ຽງ**

- ການໃຊ້ເກີນຂອບເຂດ, ການໃຊ້ຜິດ, ຫຼື ຂໍ້ຕົກລົງທີ່ໝົດອາຍຸແຕ່ຍັງຖືກໃຊ້.
- ການໃຊ້ເຄື່ອງໝາຍການຄ້າຕ່ຳໄປພາຍໃຕ້ໃບອະນຸຍາດທີ່ໝົດອາຍຸ ຫຼື ລ້າສະໄໝ, ຊຶ່ງເຮັດໃຫ້ການນຳໃຊ້ທີ່ບໍ່ໄດ້ຮັບອະນຸຍາດ "ເບິ່ງຄື" ຖືກກົດໝາຍ.

ຮູ້ວ່າເຄື່ອງໝາຍການຄ້າຂອງທ່ານຖືກນຳໃຊ້ຢູ່ທີ່ໃດ

ເກັບບັນທຶກລາຍການຕໍ່ໄປນີ້:

- ປະເທດທີ່ໄດ້ຈົດທະບຽນເຄື່ອງໝາຍແລ້ວ.
- ແພລດຟອມທີ່ແບຣນຂອງທ່ານປາກົດ (ເຊັ່ນ Buylao, IG, FB)
- ໂລໂກ້/ເວີຊັນທີ່ໃຊ້ຢູ່ (ສີ, ດຳ-ຂາວ, ຮູບແບບປົກກະຕິ).
- ຫຼັກຖານການນຳໃຊ້ (ຮູບຈັບໜ້າຈໍ, ລິ້ງກ໌).
- ຫຼັກຖານການໃຊ້: ຮູບຈັບໜ້າຈໍທີ່ມີວັນທີ, URL, ຮູບສິນຄ້າ, ສີໂຄສະນາ.

✅ ຊ່ວຍຮອງຮັບການຕໍ່ອາຍຸ, ການບັງຄັບໃຊ້ສິດ ແລະ ການຍື່ນຈົດທະບຽນລະຫວ່າງປະເທດ.

ເຄັດລັບ:

✓ ເກັບໄວ້ໃນໂຟນເດີທີ່ແບ່ງປັນໄດ້ແຕ່ປອດໄພ (ເຊັ່ນ Google Drive, Notion, Airtable).
✓ ມອບໝາຍຜູ້ຮັບຜິດຊອບຄົນໜຶ່ງໃຫ້ອັບເດດເປັນປະຈຳ.
✓ ເພີ່ມຮູບຈັບໜ້າຈໍ ຫຼື ລິ້ງກ໌ເປັນຫຼັກຖານການໃຊ້ອອນລາຍ.
✓ ຊິງ/ເຊື່ອມໂຍງກັບຂໍ້ມູນການຈົດທະບຽນເຄື່ອງໝາຍການຄ້າເພື່ອໃຫ້ສອດຄ່ອງດ້ານກົດໝາຍ.
✓ ເອກະສານດີ = ບັງຄັບໃຊ້ງ່າຍຂຶ້ນ + ໂອກາດ ເພີ່ມຂຶ້ນ ການອະນຸຍາດ.

📝 *ພິເສດ: ຖ້າເຄີຍມີການກວດສອບ, ນຳສະເໜີນັກລົງທຶນ ຫຼື ການຂໍ້ພິພາດທາງຊັບສິນທາງປັນຍາ IP - ບັນທຶກນີ້ຈະມີຄ່າຫຼາຍ!*

🧭 ການສ້າງແບຣນດິຈິຕອນທີ່ແຂງແຮງ ແລະ ເປັນເອກະພາບ

ການຕິດຕາມຊັບສິນແບຣນຂອງທ່ານທ່ອທຸກແພລດຟອມອອນໄລນ໌ ແມ່ນສຳຄັນຕໍ່ການສ້າງແບຣນທີ່ແຂງແຮງ ແລະ ສອດຄ່ອງ.

ກຳນົດຕຳແໜ່ງແບຣນຂອງທ່ານທຸກໆບ່ອນ	ຄວາມສອດຄ່ອງແລະຄວາມສຳຄັນ	ຫຼີກລ່ຽງຄວາມບໍ່ສອດຄ່ອງກັນ	ຕ້ອຕິດຕາມສູນກາງ
📌 ເວັບໄຊ(ທ໌) 📌 Instagram / Facebook / TikTok 📌 ແພລດຟອມການຄ້າທາງອິນເຕີເນັດ (Buylao, Wowbuy) 📌 Email, WhatsApp Business, Google Business	✅ ຊ່ວຍໃຫ້ຈື່ຈຳໄດ້ທັນທີ. ✅ ເສີມອັດຕະລັກຂອງເຄື່ອງໝາຍການຄ້າ ✅ ຊ່ວຍໃຫ້ຄົ້ນຫາຍີ່ຫໍ້ທາງອອນໄລນ໌ຂອງທ່ານ ✅ ສ້າງຄວາມໄວ້ວາງໃຈ (ລູກຄ້າຮູ້ທັນທີວ່າເປັນທ່ານ)	🚫 ຊື່/ໂລໂກ້ໃນບັນຊີຕ່າງໆບໍ່ຄືກັນ. 🚫 ປ່ຽນໂລໂກ້ແຕ່ບໍ່ອັບເດດທຸກແພລດຟອມ. 🚫 ຮ້ານມີຫຼາຍໂລໂກ້ ຫລາຍຊື່ (ຕົວຢ່າງ: BrandOfficial, Brand_LA,TheRealBrand)	ສ້າງ “Brand Tracker Sheet” ງ່າຍໆ ໃຫ້ບັນທຶກ: • ເວີຊັນໂລໂກ້ທີ່ໃຊ້ • ແພລດຟອມທີ່ແບຣນປາກົດ • ສະຖານະ IP: ການຈົດທະບຽນ, ວັນໝົດອາຍຸ, ໃບອະນຸຍາດ, ປະຫວັດການນຳໃຊ້ • ຊັ້ນສິນຄ້າ/ບໍລິການ ແລະ ຂອບເຂດດິນແດນ **ຜູ້ໃຊ້: ຝ່າຍກົດໝາຍ, ຜູ້ກໍ່ຕັ້ງ, ທີມຕິດຕາມ*
ຖ້າຊື່, ໂລໂກ້, ຫຼືໂທນສຽງບໍ່ຄືກັນ - ອາດນຳໄປສູ່ຄວາມສັມພັນສິນຄ້າສູນເສຍ	ສະຫຼຸບ: ຄວາມສອດຄ່ອງຍົກລະດັບການຈື່ຈຳ, ຄວາມໄວ້ວາງໃຈ ແລະ ຄວາມແຂງແຮງທາງກົດໝາຍ.	ຄວາມບໍ່ສອດຄ່ອງເຮັດໃຫ້ລູກຄ້າສັບສົນ ແລະ ອ່ອນກຳລັງໃນການໂຕ້ແຍ່ງທາງກົດໝາຍ	✓ ຊ່ວຍໃນການປ່ຽນຖ່າຍພະນັກງານ, rebranding, ແລະ ການກວດສອບ ✓ ການຄວບຄຸມຢູ່ພາຍໃນອົງກອນ

ຕົວຢ່າງຕາຕະລາງຕິດຕາມຊັບສິນທາງປັນຍາ IP

ປະເພດ IP	ຂອບເຂດອຳນາດ	ເລກທີ່ຈົດທະບຽນ	ວັນໝົດອາຍຸ	ກຳນົດຕໍ່ອາຍຸ	ການໃຫ້ໃຊ້ສິດ	ໝາຍເຫດ
TM: BRAND	ລາວ	23xxx	12/03/2033	12/03/2033	ບໍ່	ໃຊ້ຢູ່ໃນ Facebook + Instagram
TM: BRAND	WIPO (ID, LA)	IR1622xxx	01/09/2032	01/09/2032	ມີ	ໃຫ້ສິດໃຊ້ແກ່ Brand Asia Sdn Bhd

✅ *ຄຳແນະນຳ: ໃຊ້ Excel, Airtable ຫຼື Notion ເພື່ອສ້າງທະບຽນ IP ແບບອັບເດດໄດ້ ແລະແບ່ງປັນໄດ້.*

ການລວມເຄື່ອງໝາຍການຄ້າໃສ່ຍຸດທະສາດແບຣນໂດຍລວມ

.

ຂັ້ນຕອນ 1: ປັບແບຣນໃຫ້ສອດຄ່ອງກັບຍຸດທະສາດທຸລະກິດ

- ກຳນົດເປົ້າໝາຍ & ພາລະກິດ - ໃຫ້ເລື່ອງລາວແບຣນເປັນເອກະລັກ ແລະ ສາມາດປົກປ້ອງໄດ້.
- ກຳນົດກຸ່ມເປົ້າໝາຍ & ຕະຫຼາດ - ຕັດສິນໃຈວ່າຈະຈົດທະບຽນທີ່ໃດ.
- ເນັ້ນຄ່ານິຍົມ & USP - ເສີມກຳລັງຜ່ານ IP (ຄຳຂວັນ, ດີຊາຍ).
- ຮັກສາຄວາມສອດຄ່ອງທາງຍຸດທະສາດ - ຜະລິດຕະພັນ/ບໍລິການທຸກຢ່າງໃຊ້ເຄື່ອງໝາຍຢ່າງຖືກຕ້ອງ ແລະ ສະໝໍ່າສະເໝີ.

ຂັ້ນຕອນ 2: ພັດທະນາອັດຕະລັກແບຣນທີ່ປົກປ້ອງໄດ້

- ໃຊ້ເຄື່ອງມືອອກແບບທີ່ປະຢັດ ແຕ່ສ້າງເນື້ອຫາທີ່ເປັນເຈົ້າຂອງແທ້.
- ອອກແບບພາບລັກໃຫ້ໂດດເດັ່ນ - ຫຼີກລ້ຽງອົງປະກອບທົ່ວໄປ/ໃຊ້ກັນຫຼາຍ.
- ສ້າງ Brand Style Guide ກຳນົດການໃຊ້ ™/® ການຈົດທະບຽນເຄື່ອງໝາຍການຄ້າຢ່າງຊັດເຈນ.
- ກຳນົດບຸກຄະລິກ & ນ້ຳສຽງຂອງແບຣນ - ຄວາມໂດດເດັ່ນຊ່ວຍໃຫ້ຈົດທະບຽນໄດ້ງ່າຍ.
- ຮັກສາຄວາມປອດໄພ IP ທີ່ກ່ຽວຂ້ອງ: ໂດເມນ, ຊື່ບັນຊີໂຊຊຽວ, ຄຳຂວັນ.

ຂັ້ນຕອນ 3: ສ້າງແບຣນແລະປົກປ້ອງໃນງົບລຳກັດ

- ໃຊ້ເຄື່ອງມືອອກແບບທີ່ປະຢັດ ແຕ່ສ້າງເນື້ອຫາທີ່ເປັນເຈົ້າຂອງແທ້.
- ຈອງຊື່ບັນຊີໂຊຊຽວໃຫ້ສອດຄ່ອງ - ສ້າງ ຫຼັກຖານການນຳໃຊ້.
- ກຳນົດລາຍລະອຽດຫຸ່ນສ່ວນດ້ວຍຂໍ້ກຳນົດ/ໃບອະນຸຍາດ IP ທີ່ຊັດເຈນ.
- ໃຫ້ລາຍຊື່ທາງການທຸກງແຜລດຟອມສະແດງຊື່/ໂລໂກ້ທີ່ຈົດທະບຽນເທົ່ານັ້ນ.


ຂັ້ນຕອນ 4: ເພີ່ມມູນຄ່າໃຫ້ເຄື່ອງໝາຍການຄ້າ

- ສົ່ງມອບຄຸນນະພາບຢ່າງສະໝໍ່າ່ສະເໝີ - ສ້າງຊ່ອງທາງທີ່ເຊື່ອມໂຍງກັບ IP ຂອງທ່ານ.
- ໃຊ້ ການເລົ່າເລື່ອງທີ່ໄປທີ່ມາຂອງທ່ານ ເພື່ອເຊື່ອມໂຍງທາງອາລົມກັບລູກຄ້າ (ແບ່ງປັນ "ເລື່ອງຜູ້ກໍ່ຕັ້ງ" *ໃນບັນຈຸພັນ ແລະ ໂຊຊຽວມີເດຍ).*
- ຕິດຕາມການໃຊ້ ແລະ ການລົງຂາຍສິນຄ້າປອມ.
- ໂຄສະນາໃບຍ້ອງຍໍ ແລະ ້ ລາງວັນຕ່າງໆ ທີ່ໄດ້ມາ - ເພື່ອເພີ່ມພູນຊື່ສຽງແບຣນ.

ຂັ້ນຕອນ 5: ບໍລິຫານ ແລະ ຕໍ່ຍອດຊັບສິນເຄື່ອງໝາຍການຄ້າ

- ຮັກສາ ເຄື່ອງຕິດຕາມ brand - ຕິດຕາມວັນຕໍ່ອາຍຸ ແລະ ການນຳໃຊ້.
- ຍື່ນຈົດເຄື່ອງໝາຍກ່ອນສຳລັບສາຍສິນຄ້າ ຫຼື ເຂດພື້ນທີ່ໃໝ່ຕັ້ງແຕ່ເນີ່ນໆ.
- ຕິດຕາມ "ແບຣນ" - ຍອດຂາຍ, ການກ່າວເຖິງ, ລາຍງານການລະເມີດ.
- ປັບຮູບໂລໂກ້/ການຕົກແຕ່ງແບຣນ ຫຼັງຜ່ານຂະບວນການທາງຊັບສິນທາງປັນຍາ ເທົ່ານັ້ນ - ຫຼີກລ້ຽງການລະເມີດສິດຂອງຜູ້ອື່ນ.
- ນຳເຄື່ອງໝາຍການຄ້າໄປໃຊ້ໃນ ການອະນຸຍາ, ການຂະຫຍາຍທຸລະກິດ franchising, ແລະ ການຮ່ວມມື.

✓ ແບຣນທີ່ສ້າງດີ ສາມາດຮອງຮັບການຕັ້ງລາຄາ premium ແລະ ເຮັດໃຫ້ໂດດເດັ່ນຈາກຄູ່ແຂ່ງ.
✓ Branding ບໍ່ໃຊ້ແຕ່ໂລໂກ້ - ມັນຄື "ຊື່ສຽງທຸລະກິດ" ຂອງທ່ານ.
✓ ແບຣນທີ່ແຂງແຮງ ສ້າງຄວາມໄວ້ວາງໃຈ, ການຮັບຮູ້ ແລະ ຄວາມເຊື່ອໝັ້ນໃຫ້ແກ່ຜູ້ບໍລິໂພກ.



4. ການເຮັດໃຫ້ແບຣນ(ຍີ່ຫໍ້)ເກີດລາຍໄດ້

ການຫັນແບຣນ(ຍີ່ຫໍ້)ຂອງທ່ານໃຫ້ເປັນເຄື່ອງມືທາງທຸລະກິດ

🔑 ເຄື່ອງໝາຍການຄ້າບໍ່ແມ່ນແຕ່ການຄຸ້ມຄອງທາງກົດໝາຍ - ມັນແມ່ນປະຕູໄປສູ່ການເຕີບໂຕທຸລະກິດຜ່ານການນຳໃຊ້ຢ່າງມີຍຸດທະສາດ.

ການຫັນເປັນທຸລະກິດ

ຄືການນຳໃຊ້ເຄື່ອງໝາຍການຄ້າທີ່ຈົດທະບຽນ (ຫຼື ທີ່ສາມາດຈົດທະບຽນໄດ້) ເພື່ອສ້າງລາຍຮັບ.

ປ່ຽນແບຣນຂອງທ່ານຈາກ:

ໂລໂກ້ → **ຊັບສິນທີ່ມີມູນຄ່າ**

(ສາມາດໃຫ້ສິດໃຊ້, ຂະຫຍາຍແຟຣນໄຊສ໌, ຫຼື ຮ່ວມພັນທະກັບຜູ້ອື່ນ)

ຕົວຢ່າງຂອງການຄ້າຂາຍ:

🔑 ເກັບຄ່າໃຊ້ແບຣນຂອງທ່ານຈາກຜູ້ອື່ນ (ການອະນຸຍາດ/ການໃຫ້ສິດນຳໃຊ້)

🔑 ຂະຫຍາຍທຸລະກິດຜ່ານແຟຣນໄຊສ໌ (franchising)

🔑 ສ້າງລາຍຮັບຈາກການຮ່ວມມືອອນລາຍ ຫຼື affiliate branding

ວິທີສ້າງລາຍຮັບ ຈາກອັດຕະລັກ ແບຣນຂອງທ່ານ

ການໃຫ້ສິດນຳໃຊ້

ໃຫ້ຜູ້ອື່ນນຳໃຊ້ແບຣນ (ຊື່/ໂລໂກ້) ຂອງທ່ານ ໃນສິນຄ້າຂອງເຂົາເຈົ້າ ແລກກັບຄ່າທຳນຽມ/ຄ່າລິຂະສິດ.

ຕົວຢ່າງ: ຮ້ານກາເຟທ້ອງຖິ່ນໃຫ້ສິດໃຊ້ໂລໂກ້ແກ່ຜູ້ຜະລິດແກ້ວ ແລກກັບຄ່າລິຂະສິດ.

ແຟຣນໄຊສ์

ຈຳລອງແບບທຸລະກິດ/ແບຣນ — ຂາຍເຄື່ອງໝາຍ, ຄອນເຊັບ ແລະ ລະບົບການດຳເນີນງານ (ຊື່, ສູດ, ວິທີການ) ໃຫ້ ແຟຣນໄຊສ์.

ຕົວຢ່າງ: ຮ້ານຊາໄຂ່ມຸກຂາຍສິດຝຶກອົບຮົມໃຫ້ຜູ້ອື່ນເປີດສາຂາ “YourBrand Tea”

ການຮ່ວມມືທາງ ແພລດຟອມອອນໄລน์

ຮ່ວມມືກັບ blogger, influencer ຫຼື ແບຣນທີ່ສົ່ງເສີມກັນ ເພື່ອສ້າງຄອນເທນต์ ຮ່ວມ (co-branded).

ຕົວຢ່າງ: ຮ້ານຂອງຫວານງານຝືມື ຮ່ວມ ງານກັບ influencer ສາຍອາຫານໃນ Instagram.

ຮ່ວມແບຣນ & ຂໍ້ຕົກລົງກັບ ຜູ້ຈຳໜ່າຍ

ເຮັດວຽກກັບຮ້ານຄ້າ/ຜູ້ຈັດງານ ເພື່ອໃຫ້ ແບຣນຂອງທ່ານໂດດດັ່ນ.

ຕົວຢ່າງ: ແບຣນນ้ำผึดໝากไม้ร่วมมือกับ สายฝึดเนด เพื่อขายขอด “YourJuice at FitGym”.

ພາກຮ່ວມ e-commerce

ຂາຍຜ່ານ marketplace ທີ່ຄັດເລືອກ ຫຼື ຜ່ານຄູ່ຮ່ວມ white-label ເພື່ອເຂົ້າຫາລูกค้าใหม่.

ຕົວຢ່າງ : SME ผะลิดตะพันบໍລิหานผือ ขายฉุดสินค้าของตันในเอับ e-commerce.

ການໂອນສິດເຄື່ອງໝາຍການ ຄ້າ

ขายสิดในเคื่องหมายการค้าแบบ ถาวอน แลกกับเงิน.

ຕົວຢ່າງ : ร้านอาหานโอนสิดเคื่องหมาย “YumYum Bites” ใหับักลังทีน เพื่อหาทีนเปิดสาขาทิสอง.







Trademark Assignment

ເຄັດລັບ: ຄอนนำใช้ “สันยาที่ละอุงดบ่ฉับฉ้อน” ที่กำบ็ดค่าทำนุม, ไลยะเอลา และ มาดตะถาน คุนนะพาบ เผื่อให้แบรนของท่านได้รับการปักป้องในขะนะที่เติบโต.

ພື້ນຖານການໃຫ້ສິດໃຊ້ເຄື່ອງໝາຍການຄ້າ

ແມ່ນການໃຫ້ໃບອະນຸຍາດເຄື່ອງໝາຍການຄ້າ, ມັນເຮັດວຽກແນວໃດ, ແລະ ຂໍ້ກຳນົດທົ່ວໄປ

ໃບອະນຸຍາດເຄື່ອງໝາຍການຄ້າ

ຂໍ້ຕົກລົງທາງກົດໝາຍທີ່ເຈົ້າຂອງ **(licensor)** ອະນຸຍາດໃຫ້ຝ່າຍອື່ນ **(licensee)** ໃຊ້ເຄື່ອງໝາຍການຄ້າ, ມັກແລກກັບການເກັບເປັນມູນຄ່າ.

ວິທີການເຮັດວຽກ::

- ອາດເປັນເອກະສິດ (only 1 licensee) ຫຼື ບໍ່ເອກະສິດ (many)
- ໃຊ້ເພື່ອຂະຫຍາຍການເຂົ້າເຖິງໂດຍບໍ່ສຽງແຕະຕ້ອງເຖິງສິດຄວາມເປັນເຈົ້າຂອງ
- ໃຫ້ສິດທິທາງກົດໝາຍແກ່ licensee ໃນການໃຊ້ແບຣນຕາມເງື່ອນໄຂທີ່ຕົກລົງ.

ລາຍການກວດສອບທົ່ວໄປ ສຳລັບ SMEs:

- **ເຄື່ອງໝາຍການຄ້າທີ່ໃຫ້ສິດຕ້ອງຈົດທະບຽນໃນລາວ.**
- **ບັນທຶກສັນຍາໃບອະນຸຍາດຂຽນທີ່ ກົມຊັບສິນທາງປັນຍາ ເພື່ອໃຫ້ບັງຄັບໃຊ້ໄດ້.**
- **ຂໍ້ກຳນົດທີ່ຄວນມີໃນສັນຍາ:**

ຄູ່ສັນຍາ - ໃຜແມ່ນ licensor ແລະ licensee?

ຂອບເຂດຂອງໃບອະນຸຍາດ - ເຄື່ອງໝາຍໃດທີ່ໄດ້ຮັບສິດ, ໃຊ້ເພື່ອຫຍັງ, ແລະ ອະນຸຍາດໃຫ້ໃຊ້ກັບສິນຄ້າ/ບໍລິການໃດ?

ຂອບເຂດດິນແດນ - ໃຊ້ໄດ້ບ່ອນໃດ (ເຊັ່ນ ທົ່ວລາວ ຫຼື ນະຄອນຫຼວງວຽງຈັນເທົ່ານັ້ນ)?

ໄລຍະເວລາ - ອັນເລີ່ມ-ອັນສິ້ນສຸດ ແລະ ເງື່ອນໄຂການຕໍ່ອາຍຸ

ຄ່າທຳນຽມ / ຄ່າລິຂະສິດ - ຄ່າທຳນຽມຕາຍຕົວ, % ຂອງລາຍຮັບ, ຫຼື ຮູບແບບປະສົມ?

ການຄວບຄຸມຄຸນນະພາບ - ຄູ່ມື/ມາດຕະຖານແບຣນທີ່ licensee ຕ້ອງປະຕິບັດ

ຂໍ້ກຳນົດການສິ້ນສຸດສັນຍາ - ເງື່ອນໄຂໃນການຢຸດສັນຍາ

ຄຳຖະແຫຼງຄວາມເປັນເຈົ້າຂອງ - ຢືນຢັນວ່າຄວາມເປັນເຈົ້າຂອງເຄື່ອງໝາຍຍັງເປັນຂອງທ່ານ

ການແກ້ໄຂຂໍ້ພິພາດ – ກົດກາ/ກະບວນການໃນການແກ້ໄຂຂໍ້ພິພາດ

✅ *ຄຳ ແນະນຳ: ຈົດບັນທຶກ/ລົງທະບຽນສັນຍາຂຽນເປັນລາຍລັກອັກສອນທຸກຄັ້ງ - ຫຼີກລ້ຽງການຕົກລົງແບບຈັບມື..*

ກໍລະນີສຶກສາ: ເສັ້ນທາງແຟນໄຊສ໌ຂອງ Sinouk Coffee Sole Co., Ltd

ເຄື່ອງໝາຍທີ່ຈົດທະບຽນ ແລະ ປະເພດຊັບສິນທາງປັນຍາ

Sinouk Coffee Sole Co., Ltd. ໄດ້ຈົດທະບຽນເຄື່ອງໝາຍດັ່ງຕໍ່ໄປນີ້ກັບ DIP: 'Sinouk with logo', 'Café Sinouk with logo', ແລະ 'Sinouk DRIP COFFEE'.

ເຄື່ອງໝາຍທີ່ຈົດທະບຽນໄດ້ເປີດໂອກາດໃຫ້ດຳເນີນຄະດີທາງກົດໝາຍ ແລະ ການຍຶດ ແລະ ຕໍ່ຕ້ານສິນຄ້າລອກຮຽນ ແບບໂດຍຮັກສາຄວາມສົມບູນຂອງແບຣນ ແລະ ຄວາມໄວ້ວາງໃຈ

ການນຳ IP ໄປໃຊ້ທາງການຄ້າ ແລະ ການຂະຫຍາຍກິດຈະການ

- ✓ ຂະຫຍາຍຜ່ານແຟຣນໄຊສ໌ Café Sinouk ທົ່ວລາວ.
- ✓ ຈຳໜ່າຍສິນຄ້າກາເຟແບຣນ (ເມັດ, ຊຸດ drip, ແຄບຊູນ).
- ✓ ນຳເລື່ອງລາວສອນກາເຟ Bolaven Plateau ມາໃຊ້ໃນການຕະຫຼາດ.
- ✓ ຈັດທ່ອງທ່ຽວກາເຟ & ຝຶກອົບຮົມ barista ເພື່ອສົ່ງເສີມແບຣນ.

ຄວາມສຳເລັດທາງທຸລະກິດ - ດ້ວຍການບໍລິຫານ IP ຢ່າງມີຍຸດທະສາດ

- ▪ ຈົດທະບຽນເຄື່ອງໝາຍປົກປ້ອງແຕ່ແບຣນ..
- ▪ ໂລໂກ້, ປ້າຍ, ບັນຈຸພັນທີ່ສອດຄ່ອງກັນ ສ້າງການຮັບຮູ້.
- ▪ ຄວບຄຸມຄຸນນະພາບຈາກສວນກາເຟ ສ້າງຄວາມໄວ້ວາງໃຈ.
- ▪ ເລື່ອງລາວຕົ້ນກຳເນີດເພີ່ມພູນ ມູນຄ່າແບຣນ ແລະ ຄວາມເຊື່ອໝັ້ນ.

🧩 ບົດຮຽນຄວາມສຳເລັດນີ້ສະທ້ອນໃຫ້ເຫັນວ່າ ການຈົດທະບຽນ IP ຢ່າງຮອບຄອບ ແລະ ການນຳໃຊ້ທາງການຄ້າຢ່າງຖືກຕ້ອງ ສາມາດເສີມສ້າງຄວາມເຂັ້ມແຂງຂອງSME ໃຫ້ບັນລຸການເຕີບໂຕທາງທຸລະກິດໄດ້ຢ່າງໂດດເດັ່ນ.



5. ການປົກປ້ອງ ແລະ ການບັງຄັບໃຊ້ສິດໃນເຄື່ອງໝາຍການຄ້າຂອງທ່ານພາຍໃຕ້ກົດໝາຍ

ເປັນຫຍັງຈຶ່ງຕ້ອງປົກປ້ອງເຄື່ອງໝາຍການຄ້າຂອງທ່ານ

ຊັບສິນທີ່ຊື້-ຂາຍໄດ້	*ຊ່ວຍໃຫ້ບໍລິສັດເຮັດຂໍ້ຕົກລົງທາງທຸລະກິດ.*
ປ້ອງກັນຄົນອື່ນຈາກການລອກຮຽນແບບ	*ເພີ່ມຄວາມໄດ້ປຽບດ້ານຕຳແໜ່ງໃນຕະຫຼາດ ຫຼື ເວລາເຂົ້າຕະຫຼາດ.*
ປົກປ້ອງການນຳໃຊ້ຂອງບໍລິສັດເອງ (ສິດໃນການດຳເນີນການ)	*ປ້ອງກັນຜູ້ອື່ນຈາກການເຂົ້າກ່ຽວກັບທຸລະກິດຂອງທ່ານ.*
ທຸລະກິດທີ່ອຸດົມໄປດ້ວຍຊັບສິນທາງປັນຍາເຕີບໂຕໄວກວ່າ	*ມີຄວາມສຳພັນໃນທາງບວກລະຫວ່າງການຖືຄອງ IPR ແລະຜົນການເສດຖະກິດ; ຜົນນີ້ເຫັນຊັດເຈນຍິ່ງຂຶ້ນສຳລັບ SMEs.*
ບໍ່ມີຊັບສິນທາງປັນຍາແມ່ນຄວາມສ່ຽງທາງກົດໝາຍ	*ຄ່າໃຊ້ຈ່າຍທາງກົດໝາຍສູງຂຶ້ນ, ການລ່າຊ້າ, ແລະຂໍ້ພິພາດ*
ສິນຄ້າທີ່ຝັງ IP ມີມູນຄ່າສູງກວ່າສິນຄ້າທົ່ວໄປ	*SME ທີ່ຖືຄອງ IPR ມີລາຍຮັບຕໍ່ພະນັກງານສູງກວ່າ 68% ເທົ່າກັບ SME ທີ່ບໍ່ຖືຄອງ IPRs**

*https://www.euipo.europa.eu/en/publications/intellectual-property-rights-and-firm-performance-in-the-european-union

ປົກປ້ອງແບຣນຂອງທ່ານທາງອອນລາຍ

ການຕິດຕາມການໃຊ້ທີ່ບໍ່ໄດ້ຮັບອະນຸຍາດຈາກທ່ານອອນລາຍ

ເປັນຫຍັງຈຶ່ງຕ້ອງຕິດຕາມ?

- ຈັບຕາສິນຄ້າປອມ/ຜູ້ລອກຮຽນແບບທີ່ໃຊ້ຊື່ທາງການ, ຊື່ແບຣນ, ໂລໂກ້ ຫຼື ບັນຈຸພັນຂອງທ່ານ.
- ລະບຸຜູ້ຂາຍທີ່ບໍ່ໄດ້ຮັບອະນຸຍາດໃນ e-commerce ແລະ ໂຊຊຽວມີເດຍ.
- ເພື່ອປົກປ້ອງຄວາມໄວ້ວາງໃຈຂອງລູກຄ້າ ແລະ ຊື່ສຽງແບຣນຂອງທ່ານ.

ຄວນເຝົ້າລະວັງຫຍັງແນ່

- ລາຍການສິນຄ້າທີ່ໃຊ້ຊື່ຫຼືໂລໂກ້ຂອງທ່ານໂດຍບໍ່ຂໍອະນຸຍາດ.
- ຮ້ານອອນໄລນ໌ປອມທີ່ໃຊ້ຊື່ແບຣນຂອງທ່ານໃນ Facebook, Instagram, Buylao ແລະອື່ນໆ.
- ຮູບພາບ ຫຼື ຄຳອະທິບາຍທີ່ຖືກສຳເນົາມາຈາກເພຈທາງການຂອງທ່ານ.
- ໂຄສະນາທີ່ສະແດງເປັນຂາຍສິນຄ້າຂອງທ່ານ.

SMEs ສາມາດຕິດຕາມໄດ້ແນວໃດ

- ຄົ້ນຫາຊື່ແບຣນຂອງທ່ານເປັນປະຈຳໃນ Facebook, Instagram, Buylao, Wowbuy ແລະ ແພລດຟອມອອນໄລນ໌ອື່ນໆ
- ໃຊ້ການແຈ້ງເຕືອນ/ເຄື່ອງມືອອນລາຍເພື່ອຮັບແຈ້ງການລະເມີດ.
- ເບິ່ງຄຳຄິດເຫັນລູກຄ້າເພື່ອຈັບສັນຍານສິນຄ້າປອມ.
- ຈັດຕັ້ງຊ່ອງທາງຮ້ອງທຸກ/ອີເມວ ເພື່ອຮັບແຈ້ງການສົ່ງໄສສິນຄ້າ/ຜູ້ຂາຍປອມຈາກລູກຄ້າ.
- ໃຊ້ເຄື່ອງມືໃນການເກັບກຳໃຫ້ລະອຽດລຶ້ດເຈນ-ບັນທຶກລາຍຊື່ຜູ້ຂາຍທີ່ໜ້າສົ່ງໄສ.
- ຕິດຕາມ flash sale ເພື່ອຈັບສິນຄ້າທີ່ຕິດແບຣນແຕ່ລາຄາຕ່ຳຜິດປົກກະຕິ.
- **National Enterprise Database (NED)** — ຊອກຫາຊື່ທາງການທີ່ລະເມີດ.

ທຸລະກິດນ້ອຍກໍສາມາດຕິດຕາມພື້ນຖານໄດ້ໂດຍບໍ່ເສຍຄ່າ. ການກວດເລັກຢ່າງສະໝ່ຳເສມ ຊ່ວຍຢັບຢັ້ງບັນຫາແຕ່ເນີ່ນໆ ແລະ ຮັກສາຊື່ສຽງແບຣນຂອງທ່ານ.

ການບັງຄັບໃຊ້ສິດແບຣນຂອງທ່ານອອນໄລນ໌

ວິທີຮັບມືກັບການລະເມີດ

ຂັ້ນຕອນຂໍໃຫ້ແພລດຟອມຖອນເນື້ອຫາ

ຂັ້ນຕອນ 1: ຮວບຮວມຫຼັກຖານ

- ເກັບຫຼັກຖານກ່ຽວກັບສິນຄ້າ/ຜູ້ຂາຍທີ່ລະເມີດ
  - ຖ່າຍຮູບໜ້າຈໍ (screenshot) ຂອງລາຍການສິນຄ້າປອມ; ລວມວັນ-ເວລາ ຖ້າເປັນໄປໄດ້.
  - ເກັບບັນທຶກ URL (ລິ້ງກ໌) ຂອງໜ້າຜູ້ຂາຍ ຫຼື ລາຍການສິນຄ້າ.
  - ຂໍ້ມູນລະບຸຕົວຕົນຂອງຜູ້ຂາຍ/ຮ້ານ ຖ້າຫາກມີ.
- ສຳເນົາໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ.

ຂັ້ນຕອນ 2: ແຈ້ງໄປທີ່ແພລດຟອມ

- ສົ່ງແບບຟອມຮ້ອງທຸກ ແລະ ຫຼັກຖານປະກອບ ຜ່ານທາງອອນໄລນ໌ IP ຫຼື ຊ່ອງທາງທີ່ມີ:
  - Facebook/Instagram Brand Protection
  - ຝ່າຍບໍລິການລູກຄ້າຂອງ Buylao/Wowbuy

ຂັ້ນຕອນ 3: ຕິດຕາມຜົນ

- ຕິດຕາມການຕອບກັບ ຫຼື ອີເມວຢ່າງໃກ້ຊິດ.
- ບັນທຶກຜົນ (ຕົວຢ່າງ: ລຶບລາຍການແລ້ວ, ເຕືອນຜູ້ຂາຍ).
- ເກັບຮັກສາອີເມວຢືນຢັນທັ້ງໝົດເພື່ອເປັນຫຼັກຖານ.

ຍົກລະດັບໄປສູ່ການບັງຄັບໃຊ້ທາງກົດໝາຍ

ເມື່ອໃດທີ່ SMEs ຄວນຍົກລະດັບ?

- ເມື່ອຜູ້ຂາຍຄົນເດີມຍ້ອງຂາຍສິນຄ້າປອມຕໍ່ ຫຼັງຈາກມີການຖອນໂພສແລ້ວ.
- ເມື່ອພົບບັນຊີຜູ້ຂາຍຫຼາຍບັນຊີທີ່ເຊື່ອມໂຍງກັນ (ເຄືອຂ່າຍສິນຄ້າປອມ).
- ເມື່ອສິນຄ້າປອມປາກົດໃນຮ້ານຄ້າ ຫຼື ຕະຫຼາດຕົວຈິງ.

SMEs ສາມາດເຮັດຫຍັງໄດ້?

✅ **ສົ່ງຈົດໝາຍເຕືອນຢ່າງເປັນທາງການ (Cease-and-Desist)**

- ລະບຸສິດ IP ຂອງທ່ານໃຫ້ຊັດ
- ຮ້ອງຂໍໃຫ້ຢຸດການກະທຳທີ່ລະເມີດ.
- ແຈ້ງເຕືອນຜົນທາງກົດໝາຍທີ່ອາດເກີດຂຶ້ນ.

✅ ຍື່ນຮ້ອງຕໍ່ອົງການທີ່ມີອຳນາດ (ເຊັ່ນ: ຕຳຫຼວດເສດຖະກິດ), ໄກ່ເກ່ຍ (arbitration), ຫຼື ຟ້ອງຄະດີທີ່ ສານ ປະຊາຊົນ ເພື່ອການຢັບຢັ້ງທີ່ເຂັ້ມຂຶ້ນ.

ພິຈາລະນາປຶກສາກັບຕົວແທນ IP ຫຼື ທະນາຍຄວາມໃນທ້ອງຖິ່ນ ເພື່ອຮັບຄຳແນະນຳເບື້ອງຕົ້ນກ່ອນດຳເນີນການບັງຄັບໃຊ້.

ປະເດັນສຳຄັນ

SMEs ກໍສາມາດປົກປ້ອງແບຣນອອນໄລນ໌ໄດ້.

- ຕໍ່ອາຍຸການຈົດທະບຽນ TM ໃຫ້ທັນເວລາ ເພື່ອຮັບປະກັນການບັງຄັບໃຊ້ຕໍ່ເນື່ອງ.
- ຈັດຕຽມໃບຢັ້ງຢືນ TM ແລະ ຄູ່ມືຈຳແນກສິນຄ້າແທ້/ປອມ.
- ໃຊ້ຂັ້ນຕອນ takedown ງ່າຍໆ ເພື່ອຖອນຂອງປອມອອກຈາກແພລດຟອມ.
- ເກັບຮັກສາຫຼັກຖານ ແລະ ຕິດຕາມຜົນເພື່ອບັນທຶກ.
- ຖ້າຍັງມີບັນຫາ, ສົ່ງຈົດໝາຍເຕືອນ ຫຼື ປຶກສາ IP.
- ຈັດທຳລາຍຊື່ຕົວແທນ IP ລ່ວງໜ້າ ເພື່ອສະໜັບສະໜຸນເວລາຈຳເປັນ.
- ຮູ້ທາງເລືອກຂອງທ່ານໂດຍປຶກສາກັບ SME Helpdesk ຫຼື ຕົວແທນ IP ທີ່ເຊື່ອໃຈ.

ຄວາມທ້າທາຍໃນ IP ຂອງ SMEs

ຄວາມທ້າທາຍ	ທາງອອກ IP ສຳລັບ SMEs
ຂາດງົບປະມານສຳລັບ IP; ຂາດທຶນເພື່ອລົງທຶນໃນ IP	• SMEs ຈຳເປັນຕ້ອງຈັດສັນງົບສຳລັບຄ່າໃຊ້ຈ່າຍ IP. • ໃຊ້ຈ່າຍຄ່ອຍໆຕາມເວລາ ເພື່ອສະສົມ IP ເພີ່ມ. • ຫຼາຍປະເທດມີທຶນອຸດໜູນຂອງລັດສຳລັບ IP.
ຂາດຄວາມຊ່ຽວຊານດ້ານ IP - ຈະໄດ້ມາຊຶ່ງ IP ໄດ້ແນວໃດ ແລະ ນຳໃຊ້ໃນທຸລະກິດແນວໃດ.	• SMEs ຕ້ອງສ້າງຄວາມເຂົ້າໃຈ/ຄວາມຊຳນານ - ຜ່ານຫຼັກສູດເຊັ່ນນີ້ ແລະ ຊັບພະຍາກອນອອນລາຍ. • ໃຊ້ທີ່ປຶກສາ IP ຢ່າງຮອບຄອບ! • ໃຊ້ເຄື່ອງມືອອນລາຍ.
ຊັບພະຍາກອນການບໍລິຫານ IP ຈຳກັດ	• ຖ້າບໍ່ມີທີມ IP, ຄວນແຕ່ງຕັ້ງຜູ້ຮັບຜິດຊອບຄົນໜຶ່ງໃຫ້ຈັດການ IP, ຝຶກອົບຮົມເຂົາ ແລະ ໃຊ້ທີ່ປຶກສາພາຍນອກ

ບົດຮຽນການສ້າງແບຣນຈາກເລື່ອງຈິງສຳລັບວິສາຫະກິດລາວຂະໜາດນ້ອຍແລະຂະໜາດກາງ

ກໍລະນີ	ເກີດຫຍັງຂຶ້ນ?	ບົດຮຽນສຳຄັນສຳລັບSMEs
Luk Fook Jewelry vs ແບຣນລອກເລຍ 六福珠寶 LUKFOOK JEWELLERY 六福	• ການນຳໃຊ້ເຄື່ອງໝາຍການຄ້າ Luk Fook ໂດຍບໍ່ໄດ້ຮັບອະນຸຍາດ ຖືກພົບທາງອອນລາຍໃນເຂດ Golden Triangle SEZ ໂດຍຖືກຄົ້ນພົບຄັ້ງທຳອິດຜ່ານວິດີໂອໃນ Douyin ໜຶ່ງຄລິບ. • ເຈົ້າຂອງແບຣນໄດ້ດຳເນີນການສືບສວນ ແລະ ສົ່ງຈົດໝາຍເຕືອນ (C&D letter) ໃຫ້ຜູ້ລະເມີດ, ໃນທີ່ສຸດຜ່າຍລະເມີດຍອມຮັບທີ່ຈະຢຸດການກະທຳລະເມີດທັງໝົດ.	✅ ຕິດຕາມການນຳໃຊ້ແບຣນຢ່າງສະໝ່ຳສະເໝີ (ທັງອອນໄລນ໌ ແລະ ອອຟໄລນ໌) ຫຼັງຈາກຈົດທະບຽນແລ້ວ ເພື່ອປ້ອງກັນການນຳໃຊ້ໃນທາງທີ່ຜິດ. ✅ ເກັບກຳຫຼັກຖານໃຫ້ຄົບຖ້ວນ ແລະ ເປັນລະບົບ. ✅ ປັບຮູບແບບການບັງຄັບໃຊ້ກົດໝາຍໃຫ້ເໝາະກັບສະພາບຄວາມເປັນຈິງໃນທ້ອງຖິ່ນ.
ເຄື່ອງໝາຍການຄ້າ “Siam Kubota” (2022) ตราช้าง TRA CHANG THAI CHANG ไทยช้าง RACHA CHANG ราชาช้าง	• Siam Kubota ໄດ້ພົບເຄື່ອງໝາຍການຄ້າ 2 ອັນ ສຳລັບລົດໄຖນາໃນລາວ ທີ່ມີຮູບລັກສະນະຄ້າຍຄືກັບເຄື່ອງໝາຍຂອງຕົນຢ່າງໃກ້ຊິດ. • ບໍລິສັດໄດ້ຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນເຄື່ອງໝາຍເຫຼົ່ານັ້ນ ໂດຍອ້າງວ່າເປັນເຄື່ອງໝາຍທີ່ຄ້າຍຄືຈົນເຮັດໃຫ້ເກີດຄວາມສັບສົນ ແລະ ໄດ້ຖືກຈົດທະບຽນໂດຍບໍ່ຊອບທຳ, ພ້ອມທັງນຳສະເໜີຫຼັກຖານການນຳໃຊ້ເພື່ອຢືນຢັນວ່າມີຄວາມພະຍາຍາມອາໄສຊື່ສຽງຂອງເຄື່ອງໝາຍ Siam Kubota.	✅ ຈົດທະບຽນເຄື່ອງໝາຍໃຫ້ໄວ ແລະ ໃນຂອບເຂດກວ້າງ, ແລະເກັບຮັກສາຫຼັກຖານການນຳໃຊ້ໄວ້ໃຫ້ດີ. ✅ ໃຊ້ມາດຕະການຍົກເລີກການຈົດທະບຽນເພື່ອຢຸດການຈົດທະບຽນທີ່ບໍ່ຊອບທຳ.
“Phouvong Jewelry” Trademark (2022) ຮ້ານຄຳ ພູວົງ PHOUVONG JEWELRY PV	• Phouvong Jewelry ໄດ້ພົບວ່າມີຮ້ານຫນຶ່ງນຳໃຊ້ເຄື່ອງໝາຍຂອງຕົນໃນການຂາຍສິນຄ້າທີ່ບໍ່ແມ່ນຂອງແບຣນ. • ຫຼັງຈາກການເຈລະຈາ, ທາງຮ້ານໄດ້ຮັບອະນຸຍາດໃຫ້ຂາຍສິນຄ້າ Phouvong Jewelry ແທ້ ແລະ ປະຕິບັດຕາມກົດໝາຍ	✅ ໃຊ້ໂອກາດໃນການເຈລະຈາ ເພື່ອຂະຫຍາຍທຸລະກິດ ແລະ ລົດຜ່ອນຄ່າໃຊ້ຈ່າຍຈາກການຟ້ອງຮ້ອງຄະດີ.

ບົດຮຽນສຳຄັນສຳລັບ SME ໃນລາວ

ຈຸດປະສົງຂອງການຄຸ້ມຄອງເຄື່ອງໝາຍການຄ້າ ສຳລັບ SME ໃນ ລາວ

ປົກປ້ອງຊື່ທຸລະກິດ, ໂລໂກ້ ແລະ ສິນຄ້າ ບໍ່ໃຫ້ຄົນອື່ນລອກຮຽນແບບ ຫຼື ປ[illegible]ງ

ສ້າງຄວາມເຊື່ອໃຈໃຫ້ລູກຄ້າ ແລະ ຊ່ວຍໃຫ້ທຸລະກິດໂດດເດ່ນກວ່າຄູ່ແຂ່ງ

ສະໜັບສະໜູນການຂາຍອອນໄລນ໌ ແລະ ການສົ່ງອອກໄປປະເທດອາຊຽນ ແລະ ຕະຫຼາດອື່ນໆ

ເພີ່ມມູນຄ່າທຸລະກິດໃນໄລຍະຍາວ

1. ຈົດທະບຽນ ແລະ ໃຊ້ເຄື່ອງໝາຍການຄ້າໃຫ້ໄວ

- ເລືອກຊື່ແບຣນ ຫຼື ໂລໂກ້ທີ່ໂດດເດ່ນ ແລະ ຍື່ນຈົດທະບຽນໃນລາວ (ແລະ ປະເທດສຳຄັນທີ່ຈະສົ່ງອອກ) ໃຫ້ໄວທີ່ສຸດ

ຈື່ໄວ້: ລາວໃຊ້ຫຼັກການ ***"ຜູ້ທີ່ຍື່ນກ່ອນໄດ້ສິດກ່ອນ"*** - ຖ້າຄົນອື່ນຈົດທະບຽນກ່ອນ, ທ່ານອາດສູນເສຍສິດຂອງຕົນ

2. ສ້າງແບຣນດິຈິຕອນໃຫ້ສອດຄ່ອງ

- ໃຊ້ຊື່, ໂລໂກ້ ແລະ ຄຳຂວັນດຽວກັນ ໃນເວັບໄຊ, ໂຊເຊຍມີເດຍ ແລະ ແພລດຟອມຂາຍອອນໄລນ໌
- ຈົດທະບຽນຊື່ໂດເມນ ແລະ ຊື່ບັນຊີໂຊເຊຍມີເດຍໃຫ້ໄວ ແມ່ນແມ່ນວ່າຍັງບໍ່ໄດ້ໃຊ້ງານເຕັມທີ່

3. ຕິດຕາມ ແລະ ຈັດການຊັບສິນແບຣນຂອງທ່ານ


- ເກັບຮັກສາບັນທຶກ IP ແບບງ່າຍ (ເຊັ່ນ Excel ຫຼື Notion) ໂດຍລະບຸ: ເຄື່ອງໝາຍ, ປະເພດ, ປະເທດ, ອັນຕໍ່ອາຍຸ ແລະ ບ່ອນທີ່ໃຊ້ແບຣນ
- ການມີບັນທຶກທີ່ດີ ຊ່ວຍໃຫ້ການຕໍ່ອາຍຸ, ການປົກປ້ອງສິດ ແລະ ການກວດສອບຈາກນັກລົງທຶນ ເຮັດໄດ້ງ່າຍຂຶ້ນ

4. ນຳໃຊ້ແບຣນໃຫ້ເປັນເຄື່ອງມືທາງທຸລະກິດ

- ເຄື່ອງໝາຍການຄ້າທີ່ໄດ້ຮັບການປົກປ້ອງ ແລະ ເຊື່ອຖືໄດ້ ຊ່ວຍໃຫ້ຕັ້ງລາຄາສູງຂຶ້ນ, ຂະຫຍາຍທຸລະກິດ ແລະ ຮ່ວມມືກັບພາກສ່ວນອື່ນ
- IP ທີ່ແຂງແຮງ ຊ່ວຍໃຫ້ SME ເຕີບໂຕໄດ້ໄວຂຶ້ນ ແລະ ເພີ່ມມູນຄ່າລວມຂອງທຸລະກິດ

5. ຕິດຕາມອອນໄລນ໌ ແລະ ດຳເນີນການໄວເມື່ອມີການນຳໃຊ້ຜິດ(ການນຳໃຊ້ໂດຍບໍ່ໄດ້ຮັບອະນຸຍາດ)

- ຄົ້ນຫາແບຣນຂອງທ່ານເປັນປະຈຳ ໃນ Facebook, Instagram, Buylao, Wowbuy ແລະ ແພລດຟອມອື່ນໆ
- ເລີ່ມຈາກການແຈ້ງໃຫ້ແພລດຟອມລຶບເນື້ອຫາທີ່ລະເມີດກ່ອນ; ຖ້າບັນຫາຍັງມີ ໃຫ້ສົ່ງຈົດໝາຍເຕືອນ ຫຼື ແຈ້ງໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ



ຂອບໃຈຫຼາຍ

UK International Development
Partnership | Progress | Prosperity

ASEAN - UK

EIP The ASEAN-UK Economic Integration Programme

ROUSE

Contact us